# ງານຕ້ອນຮັບປີໃໝ່ລາວ

ເຊີນທ່ຽວງານຣາຕຼີສັງສັຣສົ່ງທ້າຍປີເກົ່າແລະຕ້ອນຮັບປີໃໝ່

ຈັດໂດຍອົງການພຸທສມາຄົມວັດລາວອະໂສກຣາມເມືອງຣາແຈັສເຕີ ນິວຢອກ

<u>ສຖານທີ່:</u>

**St.Mary's Ukrainian Church Hall**

**3176 St. Paul Blvd**

**Rochester, NY14617**

<u>ເວລາ:</u> 5 pm-12 am

ວັນເສົາ ທີ ໘ ເດືອນ ເມສາ ( **Saturday, April 8th 2017)**

**ບັຣເລງໂດຍ: ຄນະສິລປິນ ''ລາວບັນເທີງ''**

ແລະຊົມຣາຍການສະແດງຟ້ອນນາຕສິຂອງເຍົາວະຊົນລາວ

ພ້ອມດຽວກັນນີ້ ພວກເຮົາຍັງໄດ້ຈັດຣາງວັລຊີງໂຊຄຕ້ອນຮັບປີໃໝ່ ພ້ອມດ້ວຍ ອາຫາຣ

ແລະເຄື່ອງດື່ມໄວ້ຄອຍຕ້ອນຮັບທຸກໆທ່ານໃນຣາຄາເປັນກັນເອງ.

Admission: $10.00

ໂທຣ: 585-546-3417 / 585-310-1642



Wat Lao Asokararm. 55 Galusha St. Rochester,NY 14605.Tel: (585) 546 – 3417

# *ຂ່າວບຸນຍ໌ປະເພນີວັນສົງການຕ໌ ແລະ ຕັກບາດ*

ຈະເຣີນພອນ ມາຍັງທ່ານພຸທທະບໍຣິສັທທັງຫລາຍ ທີ່ຮັກແພງແລະນັບຖື. ໃນອາຣະດີຖີປີໃໝ່ໄດ້ໝູນວຽນມາບັນຈົບຄົບຮອບອີກ ຊຶ່ງຊາວພຸທທ໌ເຮົາທັງຫລາຍຖືເປັນປະເພນີອັນດີງາມ. ***"ສົງການຕ໌ ຄື ສັງຂານ"*** ແປວ່າ ການເຄື່ອນຍ້າຍຈາກທີ່ນຶ່ງ ໄປຍັງອີກທີ່ນຶ່ງຂອງດວງພຣະອາທິຕຍ໌ ໂຄຈອນຈາກຣາສີມີນ ( ມີນາ ) ເຂົ້າສູ່ຣາສີເມສ ( ເມສາ ) ຊຶ່ງນັບມາເປັນປີໃໝ່ຂອງລາວຫຼືໝາຍເອົາເວລາທີ່ກຳໜົດຕາມສຸຣິຍະຄະຕິ. ປີນີ້ສັງຂານລ່ວງຖືກວັນພະຫັດ ໑໓ ແຮມ໔ ຄ່ຳມື້ສັງຂານເນົາວັນສຸກ ວັນທີ ໑໔ ມື້ສັງຂານຂຶ້ນປີໃໝ່ວັນເສົາ ວັນທີ ໑໕ ພ.ສ ໒໕໖໐. ທີ່ວັດ ພວກເຮົາຈະໄດ້ເອົາພຣະພຸທຮູບລົງມາຫົດສົງເລີ້ມແຕ່ວັນອາທິດ ໙ ຂຶ້ນ ໑໓ ຄ່ຳ ເດືອນຫ້າລາວ ກົງກັບ ( April 9th, 2017) ຈຶ່ງຂໍຊອນເຊີນຊາວພຸທສາສນິກາຊົນທັງຫຼາຍຈົ່ງມາ ຮ່ວມສົງພຣະແລະທຳບຸນໃຫ້ທານຮ່ວມກັນດ້ວຍເທີ້ນ.

*ຣາຍການທຳບຸນຍ໌ ມີດັ່ງຕໍ່ລົງໄປນີ້*

**ວັນເສົາ** ແຮມ ໔ ຄ່ຳ ເດືອນຫ້າລາວ ( ເມສາ ) ພ.ສ ໒໕໖໐ ກົງກັບ ( Saturday April 15th, 2017 )

ຕອນແລງ ເລີ້ມແຕ່ ໓:໐໐ ເຖົ້າໂຮມພຸທທະບໍຣິສັທທັງຫລາຍ ກະກຽມຫ້າງຫາ ຕັ້ງຕົ້ນການຣະພຶກສາມັຄຄີ.

໕:໐໐ ໂມງ ຕອນແລງ ໄຫວ້ພຣະຮັບສີລ ພຣະສົງຄ໌ ສູດປະຣິຕະມົງຄົລ. ແລ້ວມີການຄົບງັນຕາມປະເພນີ

**ວັນອາທິດ** ແຮມ ໔ ຄ່ຳ ເດືອນຫ້າລາວ ( ເມສາ ) ພ.ສ ໒໕໖໐ ກົງກັບ (Sunday April 16th, 2017)

໙:໐໐ ໂມງເຊົ້າ. ເຖົ້າໂຮມພຸທທະບໍຣິສັທ ແລ້ວໄຫວ້ພຣະຣັຕນະໄຕຣ ຮັບສີລ ຕັກບາດ ແລະ ຖວາຍທານ

ເວລາ ໑໑:໓໐ ໂມງເຊົ້າ. ພຣະສົງຄ໌ສັນພັດຕາຫານ ( ເພລ ) ແລ້ວຟັງທັມມະເທສນາ ໑ ກັນດ໌.

ຫຼັງຈາກພິທີທາງສາສນາສຳເຣັຈແລ້ວ ຂໍເຊີນທ່ານຊາວພຸທທັງຫຼາຍບາສີ ສູ່ຂວັນຜູກແຂນປີໃໝ່ຮ່ວມກັນ.

ເວລາບ່າຍ ໔:໐໐ ໂມງແລງ ຈະມີພິທີຕົບພຣະທາຍແລະເອົາພຣະຂຶ້ນຕາມປະເພນີ.

ເນື່ອງໃນອາຣະດີຖີຂຶ້ນປີໃໝ່ ພ໌ ສ໌ ໒໕໖໐ ໃນນາມແທນໜ້າຄະນະອາສາສມັກບໍຣິຫານຂອງວັດລາວອະໂສກາຣາມຂໍອວຍໄຊຍ໌ໃຫ້ພອນແດ່ທຸກໆທ່ານຈົ່ງປະສົບແຕ່ຄວາມສຸກ ຄວາມຈະເຣີນ ປະກອບໄປດ້ວຍຈະຕຸພອນທັງສີ່ປະການ ຄື: ອາຍຸ ວັນນະ ສຸຂະ ພະລະ ຕລອດກັນທຸກຖ້ວນໜ້າດ້ວຍເທີ້ນ.

ຂໍຈະເຣີນພອນມາດ້ວຍເມຕຕາທັມມ໌

ພຣະອາຈານ ສຖາພອນ ຈັນທະຈອນຣ໌

ຂໍສະແດງມາດ້ວຍຄວາມເຄົາຣົພຮັກແພງ

WATLAO ASOKARAM OF ROCHESTER, NY